State of Oregon Employment Department

# ໃບຄຳຮ້ອງຮຽກຮ້ອງເບື້ອງຕົ້ນ

## ຂໍ້ມູນຮຽກຮ້ອງເບື້ອງຕົ້ນ

ຂໍ້ມູນທີ່ທ່ານໃຫ້ມາຈະຖືກນຳໃຊ້ເພື່ອກຳນົດການມີສິດໄດ້ຮັບເງິນຊ່ວຍເຫຼືອປະກັນໄພຫວ່າງງານຂອງທ່ານ. ມັນມີຄວາມສຳຄັນທີ່ຂໍ້ມູນຂອງທ່ານຕ້ອງຖືກຕ້ອງ ແລະ ຄົບຖ້ວນສຳລັບທຸກຄຳຖາມທີ່ໄດ້ຖາມ. ກົດໝາຍໃຫ້ການລົງໂທດສຳລັບການກັກຂໍ້ມູນ ຫຼື ເຮັດຄຳໃຫ້ການປອມເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອ.

**ກະລຸນາຕອບຄຳຖາມຕໍ່ໄປນີ້:** (* ບົ່ງບອກຫ້ອງທີ່ຕ້ອງໄດ້ຕອບ)

| | |
|---|---|
| * 1. ໃນ 12 ເດືອນຜ່ານມາ, ທ່ານໄດ້ຍື່ນຂໍ້ຮຽກຮ້ອງຂໍເງິນຊ່ວຍເຫຼືອກັບລັດອື່ນນອກເໜືອຈາກລັດໂອເຣກອນບໍ່? | ❑ ແມ່ນ ❑ ບໍ່ |
| * 2. ປ້ອນຊື່ລັດທີ່ທ່ານຢູ່ແທ້ໃນປັດຈຸບັນ: | |

***ໃນ 18 ເດືອນຜ່ານມາ, ທ່ານໄດ້:***

| | | | |
|---|---|---|---|
| * 3. ເຮັດວຽກຢູ່ໃນລັດໂອເຣກອນບໍ່? | ❑ ແມ່ນ ❑ ບໍ່ | * 4. ເຮັດວຽກຢູ່ນອກລັດໂອເຣກອນບໍ່? | ❑ ແມ່ນ ❑ ບໍ່ |
| * 5. ເຮັດໜ້າທີ່ຮັບໃຊ້ທາງທະຫານປະຕິບັດໜ້າທີ່ໃດໜຶ່ງເປັນເວລາ 90 ວັນ ຫຼື ຫຼາຍກວ່ານັ້ນ, ນອກເໜືອຈາກການຝຶກເປັນເຈົ້າໜ້າທີ່ປ້ອງກັນຊາດ (National Guard) ຫຼື ໜ່ວຍງານສະຫງວນໄວ້? | | | ❑ ແມ່ນ ❑ ບໍ່ |
| * 6. ເຮັດວຽກເປັນຄົນຄ້າຂາຍບໍ່? | | | ❑ ແມ່ນ ❑ ບໍ່ |

## ການພິສູດຕົວຕົນ (ກະລຸນາປ້ອນຂໍ້ມູນຕໍ່ໄປນີ້ເພື່ອຊ່ວຍພວກເຮົາລະບຸຕົວທ່ານ)

* ເລກປະກັນສັງຄົມ:

ພວກເຮົາກວດສອບຄວາມຖືກຕ້ອງເລກປະກັນສັງຄົມທັງໝົດຜ່ານຄອມພິວເຕີໃຫ້ກົງກັບອົງການປະກັນສັງຄົມ. ຄຳຮ້ອງຂໍປະກັນໄພຫວ່າງງານຂອງທ່ານບໍ່ສາມາດສຳເລັດໄດ້ ຖ້າເລກປະກັນສັງຄົມນີ້ບໍ່ຖືກກັນ.

ປະມວນກົດໝາຍລາຍຮັບພາຍໃນ ແລະ ກົດລະບຽບດ້ານການບໍລິຫານຂອງລັດໂອເຣກອນຮຽກຮ້ອງໃຫ້ທ່ານເປີດເຜີຍເລກປະກັນສັງຄົມຂອງທ່ານເມື່ອຮ້ອງຂໍເອົາເງິນຊົດເຊີຍການຫວ່າງງານ. ເລກປະກັນສັງຄົມຂອງທ່ານຈະຖືກນຳໃຊ້ເພື່ອລາຍງານເງິນຊ່ວຍເຫຼືອການຫວ່າງງານຂອງທ່ານໃຫ້ກັບຝ່າຍບໍລິການລາຍຮັບພາຍໃນ ແລະ ພະແນກລາຍຮັບຂອງລັດໂອເຣກອນເປັນລາຍຮັບທີ່ຕ້ອງເສຍພາສີ. ຕົວເລກຈະຖືກສົ່ງໄປຫາອົງການປະກັນສັງຄົມເພື່ອກວດສອບຄວາມຖືກຕ້ອງຂອງຕົວຕົນ. ນອກນັ້ນຕົວເລກຈະຖືກນຳໃຊ້ເປັນບັນທຶກສຳລັບການດຳເນີນການຂໍ້ຮຽກຮ້ອງຂອງທ່ານ, ເພື່ອຈຸດປະສົງທາງດ້ານສະຖິຕິ, ເພື່ອເອົາທ່ານລົງທະບຽນຢູ່ໃນລະບົບການຈັບຄູ່ວຽກທາງອີເລັກໂທຣນິກຂອງພວກເຮົາ (iMatchSkills) ແລະ ຈະຖືກແບ່ງປັນກັບຫຸ້ນສ່ວນ WorkSource Partners ສຳລັບການບໍລິການປະຕູດຽວ. ຕົວເລກອາດຈະຖືກນຳໃຊ້ສຳລັບກິດຈະກຳການເກັບໜີ້ສິນຂອງໜ່ວຍງານລັດ ແລະ ອາດຈະຖືກສົ່ງໄປຫາທະນາຄານແຫ່ງສະຫະລັດເພື່ອອອກບັດ ReliaCard VISA ໃຫ້ທ່ານທີ່ທ່ານຈະໃຊ້ຮັບເງິນຊ່ວຍເຫຼືອຂອງທ່ານ.

## ການລົງທະບຽນຂອງຜູ້ໃຊ້

| | | |
|---|---|---|
| * ຊື່: | * ນາມສະກຸນ: | ຕົວອັກສອນຫຍໍ້ຊື່ກາງ: |
| ຖ້ານາຍຈ້າງຂອງທ່ານຮູ້ຈັກທ່ານເປັນຊື່ອື່ນ, ກະລຸນາປ້ອນຊື່ນັ້ນ: | | |
| * ວັນເດືອນປີເກີດ: | * ເພດ: ❑ ຊາຍ ❑ ຍິງ | |
| * ທ່ານເປັນພົນລະເມືອງສະຫະລັດບໍ່? ❑ ແມ່ນ ❑ ບໍ່ | ເລກໃບຂັບຂີ່: | |
| ລັດທີ່ອອກໃບຂັບຂີ່ໃຫ້: | ທີ່ຢູ່ອີເມວ: | |

Oregon Employment Department (ພະແນກການຈ້າງງານລັດໂອເຣກອນ) ບໍ່ສົ່ງ ຫຼື ຂໍເອົາຂໍ້ມູນກ່ຽວຂ້ອງກັບຂໍ້ຮຽກຮ້ອງຜ່ານທາງອີເມວ. ຈະນຳໃຊ້ອີເມວເພື່ອສື່ສານບັນຫາກ່ຽວກັບການນຳໃຊ້ ແລະ ການມີເວັບໄຊຂອງພວກເຮົາໃຫ້ກັບລູກຄ້າ ແລະ ເພື່ອໃຫ້ຂໍ້ມູນທົ່ວໄປກ່ຽວກັບໂຄງການປະກັນໄພການຫວ່າງງານ.

## ຂໍ້ມູນຕິດຕໍ່

| | |
|---|---|
| * **ທີ່ຢູ່ທາງໄປສະນີ:** | ເມືອງ: |
| ລັດ: | ລະຫັດໄປສະນີ: |
| ❑ ກວດເບິ່ງຢູ່ທີ່ນີ້ ຖ້າທີ່ຢູ່ຖະໜົນຂອງທ່ານຄືກັນກັບທີ່ຢູ່ທາງໄປສະນີຂອງທ່ານ: | |
| * **ທີ່ຢູ່ຖະໜົນ:** | ເມືອງ: |
| ລັດ: | ລະຫັດໄປສະນີ: |
| ທ່ານເປັນຊົນເຜົ່າຮິສປານິກ ຫຼື ລາຕິໂນບໍ່? ❑ ແມ່ນ ❑ ບໍ່ | ເຊື້ອສາຍ: (ເລືອກທັງໝົດທີ່ຖືກຕ້ອງຈາກລາຍການລຸ່ມນີ້) |

❑ ຄົນອະເມຣິກັນອິນເດຍແດງ ຫຼື ຄົນພື້ນເມືອງອາລັສກ້າ ❑ ຄົນພື້ນເມືອງຮາວາຍ ຫຼື ຊາວເກາະປາຊິຟິກອື່ນ ❑ ຄົນອາຊາ ❑ ຄົນຜິວຂາວ
❑ ຄົນອາເມຣິກາຜິວດຳ ຫຼື ອະເມຣິກັນອາຟຣິກັນ ❑ ອື່ນໆ

| | |
|---|---|
| ທ່ານຕ້ອງການຂໍ້ມູນເປັນພາສາອື່ນນອກເໜືອຈາກພາສາອັງກິດບໍ ເພື່ອໃຫ້ເຂົ້າໃຈການບໍລິການຂອງພະແນກຈ້າງງານ? | ❑ ແມ່ນ ❑ ບໍ່ |
| ຖ້າ "ແມ່ນ", ກະລຸນາຂຽນລາຍຊື່ພາສາຕົ້ນຕໍ: | * ຮຽນຈົບຊັ້ນສູງສຸດ: |
| * ທ່ານກຳລັງໄດ້ຮັບ ຫຼື ຈະໄດ້ຮັບການຈ່າຍເງິນບໍານານ (ນອກເໜືອຈາກປະກັນສັງຄົມ) ພາຍໃນ 12 ເດືອນຂ້າງໜ້າບໍ? | ❑ ແມ່ນ ❑ ບໍ່ |
| * ທ່ານເປັນສະມາຊິກຂອງສະຫະພາບທີ່ອະນຸຍາດໃຫ້ທ່ານຊອກວຽກເຮັດຜ່ານສຳນັກງານການຈ້າງງານຂອງສະຫະພາບເທົ່ານັ້ນ ຫຼື ຈຳກັດທ່ານໃຫ້ຊອກວຽກນຳແຕ່ນາຍຈ້າງຂອງສະຫະພາບເທົ່ານັ້ນບໍ? | ❑ ແມ່ນ ❑ ບໍ່ |

## ອາຊີບຕົ້ນຕໍ

| | |
|---|---|
| * ອາຊີບຕົ້ນຕໍຂອງທ່ານແມ່ນຫຍັງ: | |
| * ທ່ານກຳລັງຊອກຫາ ແລະ ຈະຍອມຮັບວຽກປະເພດນີ້ບໍດຽວນີ້? | ❑ ແມ່ນ ❑ ບໍ່ |
| ຖ້າ "ບໍ່" ກະລຸນາອະທິບາຍວ່າຍ້ອນຫຍັງ ແລະ ປ້ອນວຽກປະເພດສະເພາະທີ່ທ່ານກຳລັງຊອກຫາຢູ່ດຽວນີ້, (ປ້ອນອາຊີບສະເພາະ. ຢ່າຂຽນເປັນລາຍການວ່າ "ອັນໃດກໍ່ໄດ້".): | |

## ຄຳຖາມການມີສິດໄດ້ຮັບ

**ໝາຍເຫດ**: ການມີສິດໄດ້ຮັບເງິນຊ່ວຍເຫຼືອທີ່ທ່ານຢາກຈະຮັບ ແລະ ມີພ້ອມໃຫ້ທັງວຽກເຕັມເວລາ ແລະ ບໍ່ເຕັມເວລາ.

| | |
|---|---|
| * ທ່ານຕັ້ງໃຈຈະເຮັດວຽກເຕັມເວລາ ແລະ ບໍ່ເຕັມເວລາບໍ? | ❑ ແມ່ນ ❑ ບໍ່ |
| ຖ້າ "ບໍ່", ກະລຸນາອະທິບາຍ: | |

**ໝາຍເຫດ**: ການມີສິດໄດ້ຮັບເງິນຊ່ວຍເຫຼືອແມ່ນທ່ານຕ້ອງຕັ້ງໃຈທີ່ຈະເຮັດວຽກ ແລະ ພ້ອມທີ່ຈະເຮັດວຽກໄດ້ໃນລະຫວ່າງເວລາທຸກມື້ ແລະ ຊົ່ວໂມງຕາມທຳນຽມການເຮັດວຽກສຳລັບວຽກປະເພດທີ່ທ່ານກຳລັງຊອກຫາ.

| | |
|---|---|
| * ທ່ານຕັ້ງໃຈທີ່ຈະເຮັດວຽກໃນລະຫວ່າງເວລາທຸກມື້ ແລະ ຊົ່ວໂມງປົກກະຕິສຳລັບວຽກປະເພດນັ້ນບໍ? | ❑ ແມ່ນ ❑ ບໍ່ |
| ຖ້າ "ບໍ່", ກະລຸນາອະທິບາຍ: | |
| * ທ່ານໄດ້ຮັບເງິນເດືອນ/ຄ່າແຮງງານເທົ່າໃດເມື່ອເຮັດວຽກສຸດທ້າຍໃນອາຊີບຕົ້ນຕໍຂອງທ່ານ? | $__________ຕໍ່__________ |
| *ທ່ານພໍໃຈທີ່ຈະຮັບອັດຕາເງິນຄ່າແຮງງານດຽວກັນບໍສຳລັບວຽກໃນອະນາຄົດ? | ❑ ແມ່ນ ❑ ບໍ່ |
| ຖ້າ "ບໍ່", ກະລຸນາອະທິບາຍວ່າຍ້ອນຫຍັງ ແລະ ປ້ອນອັດຕາເງິນຄ່າແຮງງານຕໍ່າສຸດທີ່ທ່ານພໍໃຈຈະຮັບ: | |
| * ມີເຫດຜົນໃດບໍທີ່ທ່ານບໍ່ສາມາດເລີ່ມເຮັດວຽກເຕັມເວລາໄດ້ດຽວນີ້?<br>(ຕົວຢ່າງ: ການເຮັດທຸລະກິດສ່ວນຕົວ, ການບາດເຈັບ, ການເຈັບປ່ວຍ, ການລ້ຽງລູກ, ການເດີນທາງ, ອື່ນໆ) | ❑ ແມ່ນ ❑ ບໍ່ |
| ຖ້າ "ແມ່ນ", ກະລຸນາອະທິບາຍ: | |
| *ທ່ານໄດ້ປະຕິເສດວຽກໃດໜຶ່ງຕັ້ງແຕ່ທ່ານເຮັດວຽກເທື່ອສຸດທ້າຍບໍ? | ❑ ແມ່ນ ❑ ບໍ່ |
| ຖ້າ "ແມ່ນ", ກະລຸນາອະທິບາຍ: | |
| *ທ່ານກຳລັງເຂົ້າໂຮງຮຽນຢູ່ບໍ? | ❑ ບໍ່ ❑ ເຕັມເວລາ ❑ ບໍ່ເຕັມເວລາ |
| * ໃນ 18 ເດືອນຜ່ານມາ, ທ່ານໄດ້ເຮັດວຽກໃຫ້ນາຍຈ້າງຫຼາຍກວ່າໜຶ່ງຄົນບໍ? | ❑ ແມ່ນ ❑ ບໍ່ |
| * ທ່ານເຮັດທຸລະກິດສ່ວນຕົວບໍ? | ❑ ແມ່ນ ❑ ບໍ່ |
| * ທ່ານເຮັດວຽກເປັນນັກກິລາອາຊີບບໍໃນລະຫວ່າງ 18 ເດືອນຜ່ານມາ? | ❑ ແມ່ນ ❑ ບໍ່ |
| ປະຈຸບັນທ່ານເຮັດວຽກບໍ? | ❑ ແມ່ນ ❑ ບໍ່ |

| | |
|---|---|
| ທ່ານສາມາດເຮັດວຽກໃດໜຶ່ງໄດ້ບໍເນື່ອງຈາກການເຈັບເປັນ ຫຼື ການບາດເຈັບໃນລະຫວ່າງໄຕມາດປະຕິທິນໃດໜຶ່ງສ່ວນໃຫຍ່ໃນ 18 ເດືອນຜ່ານມາ? | ❑ແມ່ນ ❑ ບໍ່ |
| ຢ່າງໜ້ອຍລາຍຮັບທີ່ຫາມາໄດ້ຂອງທ່ານເຄິ່ງໜຶ່ງໃນ 12 ເດືອນຜ່ານມານັ້ນມາຈາກວຽກເກັບກູ້ຜົນຜະລິດໃນຟາມ, ສວນ, ຫ້ອງທົ່ງ, ທົ່ງລ້ຽງສັດ, ເຮືອນກ້າເບ້ຍໄມ້ ແລະ/ຫຼື ຕົ້ນຄຣິສມາດບໍ? | ❑ແມ່ນ ❑ ບໍ່ |
| ຢ່າງໜ້ອຍລາຍຮັບທີ່ຫາມາໄດ້ຂອງທ່ານເຄິ່ງໜຶ່ງໃນ 12 ເດືອນຜ່ານມານັ້ນມາຈາກການປຸງແຕ່ງຊີ້ນ, ການປຸງແຕ່ງສັດປີກ, ໝາກໄມ້, ນ້ຳໝາກໄມ້ ຫຼື ການບັນຈຸກະປ໋ອງຜັກ, ການແຊ່ແຂງ, ການດອງ ຫຼື ການເອືອບ ແລະ/ຫຼື ການເຮັດແຍມ, ເຢລລີ ຫຼື ການຖະໜອມອາຫານບໍ? | ❑ແມ່ນ ❑ ບໍ່ |
| ທ່ານໄດ້ເດີນທາງ (ເກີນກວ່າໄລຍະການເດີນທາງໄປມາປົກກະຕິຈາກເຮືອນຖາວອນຂອງທ່ານ) ເພື່ອຊອກຫາ ຫຼື ຮັບວຽກໃດໜຶ່ງທີ່ເຮັດເປັນລາຍຊື່ໄວ້ໃນຄຳຖາມສອງຂໍ້ຜ່ານມາຢູ່ໃນ 12 ເດືອນຜ່ານມາບໍ? | ❑ແມ່ນ ❑ ບໍ່ |
| ທ່ານມີຄວາມບົກຜ່ອງທາງຮ່າງກາຍ ຫຼື ທາງຈິດໃຈທີ່ເປັນອຸປະສັກອັນສຳຄັນຕໍ່ການຈ້າງງານບໍ? | ❑ແມ່ນ ❑ ບໍ່ |
| ທ່ານເປັນຄູ່ສົມລົດຂອງນັກຮົບເກົ່າຜູ້ທີ່ມີຄວາມພິການ 100% ພົວພັນກັບການປະຕິບັດໜ້າທີ່, ຜູ້ທີ່ເສຍຊີວິດເນື່ອງຈາກຄວາມພິການພົວພັນກັບການປະຕິບັດໜ້າທີ່ ຫຼື ຜູ້ທີ່ສູນຫາຍໃນການປະຕິບັດໜ້າທີ່ (MIA) ຫຼື ເປັນສະເລີຍເສິກສົງຄາມ (POW) ບໍ? | ❑ແມ່ນ ❑ ບໍ່ |
| ທ່ານເຄີຍໄດ້ປະຕິບັດໜ້າທີ່ຮັບໃຊ້ຢູ່ໃນກອງທັບສະຫະລັດບໍ? | ❑ແມ່ນ ❑ ບໍ່ |

## ຂໍ້ມູນນາຍຈ້າງ

ເພື່ອຂຽນລາຍຊື່ນາຍຈ້າງເພີ່ມຕື່ມອີກ, ໃຊ້ແບບຟອມນາຍຈ້າງເພີ່ມເຕີມ ແລະ ຄັດຕິດມັນໃສ່ໃບຄຳຮ້ອງນີ້. ຂໍ້ມູນນີ້ຈະຖືກກວດສອບກັບນາຍຈ້າງຂອງທ່ານ.

ນອກນັ້ນພວກເຮົາຈະແຈ້ງໃຫ້ນາຍຈ້າງທຸກຄົນທີ່ທ່ານໄດ້ເຮັດວຽກໃຫ້ໃນລະຫວ່າງ 18 ເດືອນຜ່ານມາ.

**ໝາຍເຫດ**: ຖ້າທ່ານເຮັດທຸລະກິດສ່ວນຕົວ, ຂຽນຊື່ນາຍຈ້າງຂອງທ່ານເປັນ "ທຸລະກິດສ່ວນຕົວ".

| | | |
|---|---|---|
| **ນາຍຈ້າງຜູ້ທີ 1**: | *ຊື່ນາຍຈ້າງຄົນຫຼ້າສຸດນີ້: | |
| *ວັນທີເລີ່ມຕົ້ນເຂົ້າເຮັດວຽກ: | *ມື້ສຸດທ້າຍທີ່ເຮັດວຽກ: | |
| *ຈຳນວນເງິນທີ່ຫາໄດ້ລວມທັງໝົດສຳລັບໄລຍະເວລານີ້ (ຫຼື ການປະມານຈຳນວນທີ່ຫາໄດ້ດີທີ່ສຸດສຳລັບ 12 ເດືອນຜ່ານມາ): | | |
| * ທ່ານໄດ້ເຮັດວຽກໃຫ້ກັບນາຍຈ້າງຄົນນີ້ຢູ່ໃນລັດອື່ນທີ່ບໍ່ແມ່ນລັດໂອເຣກອນໃນສອງປີຜ່ານມາບໍ? | ❑ແມ່ນ ❑ ບໍ່ | |
| * ນາຍຈ້າງຜູ້ນີ້ເປັນໜ່ວຍງານຂອງລັດຖະບານກາງບໍ? | ❑ແມ່ນ ❑ ບໍ່ | |
| **ທີ່ຢູ່ທາງໄປສະນີຂອງນາຍຈ້າງ**: * ທີ່ຢູ່ຖະໜົນແຖວທີ 1: | | |
| ທີ່ຢູ່ຖະໜົນແຖວທີ 2: | | |
| *ເມືອງ: | *ລັດ: | *ລະຫັດໄປສະນີ: |
| ❑ ໝາຍຕິກໃສ່ບ່ອນນີ້ ຖ້າທີ່ຢູ່ທາງໄປສະນີຄືກັບທີ່ຢູ່ບ່ອນທ່ານໄດ້ເຮັດວຽກ: | | |
| **ທີ່ຢູ່ບ່ອນທີ່ທ່ານໄດ້ເຮັດວຽກ**: * ທີ່ຢູ່ຖະໜົນ: | | |
| *ເມືອງ: | *ລັດ: | *ລະຫັດໄປສະນີ: |
| *ເບີໂທລະສັບນາຍຈ້າງ: | *ຕຳແໜ່ງວຽກ: | |
| ໜ້າວຽກ: | | |
| *ອັດຕາຄ່າຈ້າງຫຼ້າສຸດ: $__________ຕໍ່________ | | |
| ທ່ານໄດ້ແຍກອອກຈາກນາຍຈ້າງຂອງທ່ານບໍ? | ❑ແມ່ນ ❑ ບໍ່ | |

ຖ້າແມ່ນ, ເປັນຫຍັງທ່ານບໍ່ເຮັດວຽກໃຫ້ກັບນາຍຈ້າງຄົນນີ້ອີກ?

❑ ປົດອອກ/ໄລ່ອອກ/ໝົດສັນຍາ ❑ ອອກ/ລາອອກດ້ວຍຄວາມສະໝັກໃຈ ❑ ປົດອອກເນື່ອງຈາກບໍ່ມີວຽກຖາວອນ

❑ ໂຈະຊົ່ວຄາວ ❑ ໃຫ້ພັກວຽກ ❑ ຍັງເຮັດວຽກຢູ່/ຕັດຊົ່ວໂມງເຮັດວຽກ ❑ ຫວ່າງງານຊົ່ວຄາວ

ຖ້າທ່ານຫວ່າງງານຊົ່ວຄາວ, ປ້ອນວັນທີທ່ານຄາດວ່າຈະກັບຄືນມາເຮັດວຽກໃສ່ບ່ອນນີ້:

**ນາຍຈ້າງຜູ້ທີ 2:** | *ຊື່ນາຍຈ້າງ:

*ວັນທີເລີ່ມຕົ້ນເຂົ້າເຮັດວຽກ: | *ມື້ສຸດທ້າຍທີ່ເຮັດວຽກ:

*ຈຳນວນເງິນທີ່ຫາໄດ້ລວມທັງໝົດສຳລັບໄລຍະເວລານີ້ (ຫຼື ການປະມານຈຳນວນທີ່ຫາໄດ້ດີທີ່ສຸດສຳລັບ 12 ເດືອນຜ່ານມາ):

* ທ່ານໄດ້ເຮັດວຽກໃຫ້ກັບນາຍຈ້າງຄົນນີ້ຢູ່ໃນລັດອື່ນທີ່ບໍ່ແມ່ນລັດໂອເຣກອນໃນສອງປີຜ່ານມາບໍ? ☐ ແມ່ນ ☐ ບໍ່

* ນາຍຈ້າງຜູ້ນີ້ເປັນໜ່ວຍງານຂອງລັດຖະບານກາງບໍ? ☐ ແມ່ນ ☐ ບໍ່

**ທີ່ຢູ່ທາງໄປສະນີຂອງນາຍຈ້າງ:** * ທີ່ຢູ່ຖະໜົນແຖວທີ 1:

ທີ່ຢູ່ຖະໜົນແຖວທີ 2:

*ເມືອງ: *ລັດ: *ລະຫັດໄປສະນີ:

☐ ໝາຍຕິກໃສ່ບ່ອນນີ້ ຖ້າທີ່ຢູ່ທາງໄປສະນີຄືກັບທີ່ຢູ່ບ່ອນທ່ານໄດ້ເຮັດວຽກ:

**ທີ່ຢູ່ບ່ອນທີ່ທ່ານໄດ້ເຮັດວຽກ:** * ທີ່ຢູ່ຖະໜົນ:

*ເມືອງ: *ລັດ: *ລະຫັດໄປສະນີ:

*ເບີໂທລະສັບນາຍຈ້າງ: | *ຕຳແໜ່ງວຽກ:

ໜ້າວຽກ:

*ອັດຕາຄ່າຈ້າງຫຼ້າສຸດ: $__________________________ຕໍ່________________

ທ່ານໄດ້ແຍກອອກຈາກນາຍຈ້າງຂອງທ່ານບໍ? ☐ ແມ່ນ ☐ ບໍ່

ຖ້າແມ່ນ, ເປັນຫຍັງທ່ານບໍ່ເຮັດວຽກໃຫ້ກັບນາຍຈ້າງຄົນນີ້ອີກ?

☐ ປົດອອກ/ໄລ່ອອກ/ໝົດສັນຍາ ☐ ອອກ/ລາອອກດ້ວຍຄວາມສະໝັກໃຈ ☐ ປົດອອກເນື່ອງຈາກບໍ່ມີວຽກຖາວອນ

☐ ໂຈະຊົ່ວຄາວ ☐ ໃຫ້ພັກວຽກ ☐ ຍັງເຮັດວຽກຢູ່/ຕັດຊົ່ວໂມງເຮັດວຽກ ☐ ຫວ່າງງານຊົ່ວຄາວ

ຖ້າທ່ານຫວ່າງງານຊົ່ວຄາວ, ປ້ອນວັນທີທ່ານຄາດວ່າຈະກັບຄືນມາເຮັດວຽກໃສ່ບ່ອນນີ້:

---

**ນາຍຈ້າງຜູ້ທີ 3:** | *ຊື່ນາຍຈ້າງ:

*ວັນທີເລີ່ມຕົ້ນເຂົ້າເຮັດວຽກ: | *ມື້ສຸດທ້າຍທີ່ເຮັດວຽກ:

*ຈຳນວນເງິນທີ່ຫາໄດ້ລວມທັງໝົດສຳລັບໄລຍະເວລານີ້ (ຫຼື ການປະມານຈຳນວນທີ່ຫາໄດ້ດີທີ່ສຸດສຳລັບ 12 ເດືອນຜ່ານມາ):

* ທ່ານໄດ້ເຮັດວຽກໃຫ້ກັບນາຍຈ້າງຄົນນີ້ຢູ່ໃນລັດອື່ນທີ່ບໍ່ແມ່ນລັດໂອເຣກອນໃນສອງປີຜ່ານມາບໍ? ☐ ແມ່ນ ☐ ບໍ່

* ນາຍຈ້າງຜູ້ນີ້ເປັນໜ່ວຍງານຂອງລັດຖະບານກາງບໍ? ☐ ແມ່ນ ☐ ບໍ່

**ທີ່ຢູ່ທາງໄປສະນີຂອງນາຍຈ້າງ:** * ທີ່ຢູ່ຖະໜົນແຖວທີ 1:

ທີ່ຢູ່ຖະໜົນແຖວທີ 2:

*ເມືອງ: *ລັດ: *ລະຫັດໄປສະນີ:

☐ ໝາຍຕິກໃສ່ບ່ອນນີ້ ຖ້າທີ່ຢູ່ທາງໄປສະນີຄືກັບທີ່ຢູ່ບ່ອນທ່ານໄດ້ເຮັດວຽກ:

**ທີ່ຢູ່ບ່ອນທີ່ທ່ານໄດ້ເຮັດວຽກ:** * ທີ່ຢູ່ຖະໜົນ:

*ເມືອງ: *ລັດ: *ລະຫັດໄປສະນີ:

*ເບີໂທລະສັບນາຍຈ້າງ: | *ຕຳແໜ່ງວຽກ:

ໜ້າວຽກ:

*ອັດຕາຄ່າຈ້າງຫຼ້າສຸດ: $__________________________ຕໍ່________________

ທ່ານໄດ້ແຍກອອກຈາກນາຍຈ້າງຂອງທ່ານບໍ? ☐ ແມ່ນ ☐ ບໍ່

ຖ້າແມ່ນ, ເປັນຫຍັງທ່ານບໍ່ເຮັດວຽກໃຫ້ກັບນາຍຈ້າງຄົນນີ້ອີກ?

☐ ປົດອອກ/ໄລ່ອອກ/ໝົດສັນຍາ ☐ ອອກ/ລາອອກດ້ວຍຄວາມສະໝັກໃຈ ☐ ປົດອອກເນື່ອງຈາກບໍ່ມີວຽກຖາວອນ

☐ ໂຈະຊົ່ວຄາວ ☐ ໃຫ້ພັກວຽກ ☐ ຍັງເຮັດວຽກຢູ່/ຕັດຊົ່ວໂມງເຮັດວຽກ ☐ ຫວ່າງງານຊົ່ວຄາວ

ຖ້າທ່ານຫວ່າງງານຊົ່ວຄາວ, ປ້ອນວັນທີທ່ານຄາດວ່າຈະກັບຄືນມາເຮັດວຽກໃສ່ບ່ອນນີ້:

## ການຫັກພາສີ

ການອະນຸຍາດໃຫ້ຫັກພາສີ
ຜົນປະໂຫຍດເງິນປະກັນໄພຫວ່າງງານໃດໜຶ່ງທີ່ທ່ານໄດ້ຮັບແມ່ນລາຍໄດ້ທີ່ຕ້ອງເສຍພາສີເຕັມສ່ວນ ຖ້າທ່ານຖືກຮຽກຮ້ອງໃຫ້ຍື່ນການສົ່ງຄືນພາສີ. ທ່ານອາດຈະຕ້ອງໄດ້ເຮັດການຊໍາລະພາສີທີ່ປະມານໄວ້. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບການຈ່າຍພາສີທີ່ປະມານໄວ້, ໃຫ້ຕິດຕໍ່ໜ່ວຍງານບໍລິການລາຍຮັບພາຍໃນ. ສໍາລັບຂໍ້ມູນພາສີຂອງລັດ, ຕິດຕໍ່ພະແນກລາຍຮັບຂອງລັດໂອເຣກອນ.

ທ່ານອາດຈະເລືອກໃຫ້ຫັກເງິນຊ່ວຍເຫຼືອຂອງທ່ານໄວ້ 10% ສໍາລັບພາສີຂອງລັດຖະບານກາງ ແລະ/ຫຼື 6% ສໍາລັບພາສີຂອງລັດ.

* ທ່ານເລືອກທີ່ຈະໃຫ້ຫັກເງິນຊ່ວຍເຫຼືອຫວ່າງງານຂອງທ່ານໄວ້ 10% ສໍາລັບພາສີຂອງລັດຖະບານກາງບໍ? ❑ ແມ່ນ ❑ ບໍ່
* ທ່ານເລືອກທີ່ຈະໃຫ້ຫັກເງິນຊ່ວຍເຫຼືອຫວ່າງງານຂອງທ່ານໄວ້ 6% ສໍາລັບພາສີຂອງລັດບໍ? ❑ ແມ່ນ ❑ ບໍ່

ການອະນຸຍາດນີ້ຈະຍັງຄົງມີຜົນນໍາໃຊ້ສໍາລັບການຮຽກຮ້ອງນີ້ຈົນກວ່າພະແນກການຈ້າງງານຂອງລັດໂອເຣກອນໄດ້ຮັບແຈ້ງການເປັນລາຍລັກອັກສອນຈາກທ່ານກ່ຽວກັບການສິ້ນສຸດຂອງມັນ.

**ໝາຍເຫດ**: ການຈ່າຍເງິນຊ່ວຍເຫຼືອຄັ້ງທໍາອິດແມ່ນຈ່າຍເປັນເຊັກ. ການຈ່າຍເງິນໃຫ້ທຸກຄັ້ງຕໍ່ມາແມ່ນຈ່າຍໃຫ້ທາງອີເລັກໂທຣນິກໂດຍບັດ ReliaCard VISA ຫຼື ຝາກເຂົ້າບັນຊີໂດຍກົງ. ເມື່ອໄດ້ຮັບການອະນຸມັດໃຫ້ຈ່າຍເງິນເທື່ອທໍາອິດຂອງທ່ານແລ້ວ, ຈະມີການສົ່ງບັດ ReliaCard VISA ເດບິດ ໃຫ້ທ່ານ. ທ່ານມີທາງເລືອກສະໝັກຂໍໃຫ້ຝາກເຂົ້າບັນຊີໂດຍກົງ, ເຖິງແນວໃດກໍ່ຕາມການຈ່າຍເງິນໃຫ້ແມ່ນຈະອອກໃຫ້ໂດຍບັດ ReliaCard ຈົນກວ່າໄດ້ຮັບໃບຄໍາຮ້ອງຂໍໃຫ້ຝາກເຂົ້າບັນຊີໂດຍກົງ.

## ປີພື້ນຖານທາງເລືອກ

ເພື່ອໃຫ້ມີຄຸນສົມບັດໄດ້ຮັບການຮຽກຮ້ອງປະກັນໄພຫວ່າງງານ, ທ່ານຕ້ອງມີຄ່າແຮງງານ/ຊົ່ວໂມງເຮັດວຽກພຽງພໍໃນປີພື້ນຖານ. ປີພື້ນຖານປົກກະຕິແມ່ນສີ່ໄຕມາດທໍາອິດຂອງຫ້າໄຕມາດສຸດທ້າຍຕາມປະຕິທິນທີ່ສໍາເລັດໃນວັນທີທ່ານຍື່ນຄໍາຮຽກຮ້ອງຂອງທ່ານ. ຖ້າທ່ານບໍ່ມີຄຸນສົມບັດສໍາລັບການຮຽກຮ້ອງປີພື້ນຖານປົກກະຕິຢູ່ໃນລັດໂອເຣກອນ ຫຼື ຕໍ່ກັບລັດອື່ນໃດໜຶ່ງທີ່ທ່ານໄດ້ເຮັດວຽກໃນລະຫວ່າງປີພື້ນຖານ, ການຮຽກຮ້ອງຂອງທ່ານຈະຖືກກໍານົດຄືນໃໝ່ດ້ວຍການໃຊ້ຄ່າແຮງງານຫຼ້າສຸດ ແລະ ພວກເຮົາຈະຍື່ນຄໍາຮຽກຮ້ອງປີພື້ນຖານທາງເລືອກ (ABY) ຂອງລັດໂອເຣກອນ.

ຄໍາຮຽກຮ້ອງປີພື້ນຖານທາງເລືອກ (ABY) ນໍາໃຊ້ຄ່າແຮງງານ/ຊົ່ວໂມງເຮັດວຽກຢູ່ໃນສີ່ໄຕມາດສຸດທ້າຍຕາມປະຕິທິນທີ່ສໍາເລັດນັບແຕ່ວັນທີທ່ານຍື່ນຄໍາຮຽກຮ້ອງຂອງທ່ານ.

ຂໍ້ມູນກ່ຽວກັບຄໍາຮຽກຮ້ອງ ABY:

1. ທ່ານບໍ່ມີສິດຕໍ່ຄໍາຮຽກຮ້ອງ ABY ຖ້າທ່ານມີຄຸນສົມບັດຄົບຖ້ວນດ້ວຍການໃຊ້ປີພື້ນຖານປົກກະຕິ. ພວກເຮົາຈະຊອກຫາຄ່າແຮງງານທີ່ຂາດໄປໃດໜຶ່ງທີ່ເປັນໄປໄດ້. ຖ້າພວກເຮົາພົບເຫັນຄ່າແຮງງານ/ຊົ່ວໂມງເຮັດວຽກເພີ່ມເຕີມຢູ່ໃນປີພື້ນຖານປົກກະຕິ, ພວກເຮົາຈະປ່ຽນແປງຄໍາຮຽກຮ້ອງ ABY ຂອງທ່ານເປັນປີພື້ນຖານປົກກະຕິ. ອັນນີ້ອາດຈະປ່ຽນແປງຈໍານວນເງິນຊ່ວຍເຫຼືອຂອງທ່ານ.
2. ສໍາລັບຄໍາຮຽກຮ້ອງ ABY, ພວກເຮົາບໍ່ເອົາໄຕມາດເກົ່າສຸດຂອງຄ່າແຮງງານ/ຊົ່ວໂມງເຮັດວຽກຈາກຄໍາຮຽກຮ້ອງຂອງທ່ານ ແລະ ເພີ່ມໄຕມາດສໍາເລັດຫຼ້າສຸດຂອງຄ່າແຮງງານ/ຊົ່ວໂມງເຮັດວຽກ.

ຖ້າທ່ານຍື່ນຄໍາຮຽກຮ້ອງ ABY ດຽວນີ້, ທ່ານບໍ່ສາມາດໃຊ້ໄຕມາດໃໝ່ກວ່າຂອງຄ່າຈ້າງຢູ່ໃນຄໍາຮຽກຮ້ອງໃດໜຶ່ງໃນອະນາຄົດໄດ້. ຄໍາຮຽກຮ້ອງຕໍ່ມາອາດຈະອີງໃສ່ແຕ່ເງິນຄ່າແຮງງານ/ຊົ່ວໂມງເຮັດວຽກສາມໄຕມາດຕາມປະຕິທິນເທົ່ານັ້ນ.

## ຄຳຢັ້ງຢືນ

**ກະລຸນາອ່ານຄຳຢັ້ງຢືນຕໍ່ໄປນີ້ກ່ອນສົ່ງໃບຄຳຮ້ອງຂໍເງິນຊ່ວຍເຫຼືອຂອງທ່ານ**.

1. ຂ້າພະເຈົ້າຢັ້ງຢືນພາຍໃຕ້ການລົງໂທດການໃຫ້ຄວາມເທັດວ່າ ຂ້າພະເຈົ້າເປັນພົນລະເມືອງຂອງສະຫະລັດ ຫຼື ໄດ້ຮັບອະນຸຍາດໃຫ້ເຮັດວຽກຢູ່ໃນສະຫະລັດຖືກຕ້ອງຕາມກົດໝາຍ.
2. ຂ້າພະເຈົ້າເຂົ້າໃຈຄຳຖາມທີ່ໄດ້ຖາມຂ້າພະເຈົ້າມາ. ຄຳຕອບຂອງຂ້າພະເຈົ້າເປັນຄວາມຈິງຕາມຄວາມຮັບຮູ້ດີທີ່ສຸດຂອງຂ້າພະເຈົ້າ.
3. ຂ້າພະເຈົ້າເຂົ້າໃຈວ່າ ກົດໝາຍຈະລົງໂທດຕໍ່ການເຮັດຄຳໃຫ້ການຜິດເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອປະກັນໄພຫວ່າງງານ.
4. ເມື່ອເຮັດການຮຽກຮ້ອງເອົາເງິນຊ່ວຍເຫຼືອປະກັນໄພຫວ່າງງານທາງອອນລາຍ ຫຼື ໂດຍທາງໂທລະສັບສຽງສຳຜັດ, ຂ້າພະເຈົ້າຍອມຮັບວ່າມີຄວາມຮັບຜິດຊອບຕໍ່ຄວາມປອດໄພຂອງຕົວເລກລະບຸບຸກຄົນ (PIN) ຂອງຂ້າພະເຈົ້າ. ຂ້າພະເຈົ້າຈະແຈ້ງໃຫ້ພະແນກການຈ້າງງານປ່ຽນ PIN ຂອງຂ້າພະເຈົ້າ ຖ້າຂ້າພະເຈົ້າລືມ PIN ຂອງຂ້າພະເຈົ້າ ຫຼື ຖ້າມີຄົນອື່ນຮູ້ຈັກມັນ.
5. ໂດຍການສົ່ງໃບຄຳຮ້ອງນີ້, ໃນທີ່ນີ້ຂ້າພະເຈົ້າລົງທະບຽນເພື່ອເຮັດວຽກ ແລະ ສະເໜີຂໍການກຳນົດເງິນຊ່ວຍເຫຼືອທີ່ອາດຈະຕ້ອງຈ່າຍໃຫ້ຂ້າພະເຈົ້າ. ຂ້າພະເຈົ້າອະນຸມັດໃຫ້ພະແນກການຈ້າງງານຮັບເອົາ ແລະ ນຳໃຊ້ຂໍ້ມູນຈາກແຫຼ່ງໃດໜຶ່ງທີ່ຂ້າພະເຈົ້າສະໜອງໃຫ້ສຳລັບການບໍລິຫານປະກັນໄພຫວ່າງງານ ແລະ ກິດຈະກຳການບໍລິການຈ້າງງານ.
6. ແຈ້ງການມີສິດໄດ້ຮັບ: ຂໍ້ກຳນົດໃນການຊອກວຽກຂອງທ່ານ

   ເງິນຊ່ວຍເຫຼືອຂອງທ່ານຈະຖືກປະຕິເສດ ຖ້າທ່ານບໍ່ໄດ້ຊອກວຽກຕາມຂໍ້ກຳນົດທີ່ກຳນົດໄວ້!

   ແຕ່ລະອາທິດທີ່ທ່ານຂໍເງິນຊ່ວຍເຫຼືອ, ທ່ານຈະຕ້ອງ:

   - ຮ່າງກາຍ ແລະ ຈິດໃຈສາມາດເຮັດວຽກ
   - ມີຄວາມພ້ອມສຳລັບວຽກເຕັມເວລາ, ນອກເວລາ, ແລະ ວຽກຊົ່ວຄາວ — ປົກກະຕິແລ້ວໃນລະຫວ່າງມື້ ແລະ ຊົ່ວໂມງ ປົກກະຕິສຳລັບປະເພດວຽກຂອງທ່ານ
   - ການຊອກວຽກຢ່າງຫ້າວຫັນສຳລັບວຽກທີ່ທ່ານອາດຈະຖືກຈ້າງໃຫ້ເຮັດ

   ເພື່ອໃຫ້ພິຈາລະນາວ່າທ່ານໄດ້ຊອກຫາວຽກຢ່າງຫ້າວຫັນ, ທ່ານຕ້ອງໄດ້ຕິດຕໍ່ກັບນາຍຈ້າງໂດຍກົງສອງຄັ້ງ ແລະ ເຮັດສາມກິດຈະ ກຳການຊອກວຽກເພີ່ມເຕີມ, ໃນແຕ່ລະອາທິດທີ່ທ່ານຮ້ອງຂໍ.

   ທ່ານຕ້ອງຕິດຕໍ່ໂດຍກົງກັບນາຍຈ້າງເພື່ອຖາມ ຫຼື ສະໝັກວຽກໃນແບບທີ່ນາຍຈ້າງມັກ. ທ່ານຕ້ອງບັນທຶກ:

   - ວັນທີທີ່ທ່ານຕິດຕໍ່
   - ຊື່ບໍລິສັດ, ເບີໂທລະສັບ ແລະ ທີ່ຢູ່, ຫຼື ໝາຍເລກປະຈຳຕົວປະກາດວຽກອອນໄລນ໌
   - ບຸກຄົນທີ່ຕິດຕໍ່ (ຖ້າມີ)
   - ວິທີທີ່ທ່ານຕິດຕໍ່ບໍລິສັດ (ໂທລະສັບ, ຊີວະປະຫວັດ, ຄຳຮ້ອງສະໝັກອອນໄລນ໌, ອີເມວ, ແລະ ອື່ນໆ)
   - ປະເພດວຽກ ຫຼື ຕຳແໜ່ງທີ່ທ່ານສະໝັກ
   - ຜົນການຕິດຕໍ່ຂອງທ່ານ (ສະໝັກ, ຈ້າງ, ບໍ່ໄດ້ຈ້າງ, ການສຳພາດ, ບໍ່ຕອບ, ແລະ ອື່ນໆ)

   ກິດຈະກຳການຊອກວຽກເພີ່ມເຕີມຂອງທ່ານອາດຈະປະກອບມີການຕິດຕໍ່ກັບນາຍຈ້າງເພີ່ມເຕີມ, ການປັບປຸງຊີວະປະຫວັດຂອງ ທ່ານ, ຫຼື ການຊອກຫາລາຍຊື່ວຽກ. ຂຽນກິດຈະກຳຊອກຫາວຽກທີ່ທ່ານໄດ້ເຮັດໄປ ແລະ ວັນທີທີ່ທ່ານໄດ້ເຮັດໄປ.

   **ເຖິງແມ່ນວ່າສະຖານະການຕໍ່ໄປນີ້ບໍ່ແມ່ນເລື່ອງທົ່ວໄປ ແລະ ບໍ່ໄດ້ໃຊ້ກັບຄົນສ່ວນໃຫຍ່, ທ່ານອາດຈະຕົກຢູ່ພາຍໃຕ້ຂໍ້ກຳນົດເຫຼົ່າ ນີ້.**

   ຖ້າທ່ານເປັນສະມາຊິກສະຫະພັນ (ຢູ່ໃນສະຖານະທີ່ດີກັບສະຫະພັນການຈັດສົ່ງທີ່ບໍ່ອະນຸຍາດໃຫ້ທ່ານຊອກຫາວຽກທີ່ບໍ່ແມ່ນສະ ຫະພັນ), ທ່ານກຳລັງຊອກຫາວຽກຢ່າງຫ້າວຫັນຖ້າທ່ານຢູ່ໃນບັນຊີລາຍຊື່ອອກຈາກການເຮັດວຽກຂອງສະຫະພັນ, ໃຫ້ຮັກສາການ ຕິດຕໍ່ກັບສະຫະພັນຂອງທ່ານ, ແລະ ມີຄວາມສາມາດໃນການຍອມຮັບ ແລະ ລາຍງານສຳລັບການເຮັດວຽກເມື່ອຖືກສົ່ງໂດຍສະຫະ ພັນ.

   ທ່ານອາດຈະຫວ່າງງານຊົ່ວຄາວ ຖ້າທ່ານຖືກປົດ ຫຼື ຫຼຸດຊົ່ວໂມງເຮັດວຽກ ແລະ ຄາດວ່າຈະກັບໄປເຮັດວຽກໃຫ້ນາຍຈ້າງເກົ່າຂອງ ທ່ານ. ທ່ານຕ້ອງກັບຄືນໄປເຮັດວຽກເຕັມເວລາ ຫຼື ເຮັດວຽກໄດ້ເງິນຫຼາຍກວ່າເງິນອຸດໜູນປະຈຳອາທິດຂອງທ່ານ. ມັນບໍ່ຄວນ ຫຼາຍກວ່າສີ່ອາທິດລະຫວ່າງອາທິດທີ່ທ່ານກາຍເປັນຄົນຫວ່າງງານຊົ່ວຄາວ ແລະ ອາທິດທີ່ທ່ານຈະກັບໄປເຮັດວຽກ. ທ່ານກຳລັງ ຊອກວຽກຢ່າງຫ້າວຫັນໂດຍການຕິດຕໍ່ກັບນາຍຈ້າງຂອງທ່ານ. ຖ້າວັນທີກັບຄືນໄປເຮັດວຽກຂອງທ່ານມີການປ່ຽນແປງ ແລະ ເກີນສີ່ອາທິດ, ທ່ານຕ້ອງເລີ່ມຊອກວຽກຢ່າງຫ້າວຫັນໃນເວລາດຽວກັນ.

   ຖ້າທ່ານເປັນພະນັກງານຂອງລັດຖະບານກາງທີ່ຫວ່າງງານຊົ່ວຄາວເນື່ອງຈາກການປິດຕົວຂອງລັດຖະບານ ແລະ ຄາດວ່າຈະສືບຕໍ່ ເຮັດວຽກກັບນາຍຈ້າງຂອງລັດຖະບານກາງຂອງທ່ານເມື່ອການປິດຕົວສິ້ນສຸດ, ທ່ານກຳລັງຊອກຫາວຽກຢ່າງຫ້າວຫັນໂດຍການ ຕິດຕໍ່ກັບນາຍຈ້າງປົກກະຕິຂອງທ່ານ ແລະ ມີຄວາມສາມາດຍອມຮັບ ແລະ ລາຍງານສຳລັບການເຮັດວຽກທີ່ເໝາະສົມກັບນາຍ ຈ້າງນັ້ນ.

   ຕິດຕໍ່ສູນ UI ທີ່1-877-345-3484 ຖ້າທ່ານບໍ່ຮູ້ວ່າສະຖານະການຂ້າງເທິງນີ້ໃຊ້ໄດ້ກັບທ່ານ ຫຼື ບໍ່.

❑ ຂ້າພະເຈົ້າເຫັນດີ

## ຂໍ້ມູນສຳຄັນທີ່ທ່ານຕ້ອງຮູ້

ເມື່ອຄຳຮຽກຮ້ອງຂອງທ່ານຖືກດຳເນີນການແລ້ວ, ລະບົບການຮຽກຮ້ອງທາງອອນລາຍເປັນວິທີໄວທີ່ສຸດເພື່ອດຳເນີນຟັງຊັນການຮຽກຮ້ອງຫຼາຍຢ່າງ ລວມທັງການຍື່ນຄຳຮຽກຮ້ອງປະຈຳອາທິດ, ການເລີ່ມຄຳຮຽກຮ້ອງຄືນໃໝ່ຫຼັງຈາກການພັກລາຍງານ, ການເບິ່ງສະຖານະຄຳຮຽກຮ້ອງຂອງທ່ານ, ການປ່ຽນແປງທີ່ຢູ່ຂອງທ່ານ ແລະ ການລົງທະບຽນຂໍໃຫ້ຝາກເງິນທາງອີເລັກໂທຣນິກ.

ບັນທຶກການຮຽກຮ້ອງການຫວ່າງງານແມ່ນເປັນຄວາມລັບ. ພວກເຮົາຈະບໍ່ເອົາຂໍ້ມູນກ່ຽວກັບຄຳຮຽກຮ້ອງຂອງທ່ານໃຫ້ກັບຜູ້ໃດທີ່ໂທມາຫາ ນອກຈາກວ່າທ່ານໄດ້ໃຫ້ການອະນຸຍາດເປີດເຜີຍເປັນລາຍລັກອັກສອນແກ່ພວກເຮົາທີ່ອະນຸຍາດໃຫ້ຄົນນັ້ນເຮັດການສອບຖາມໃນ
ນາມຂອງທ່ານ.

## ສິ່ງທີ່ຈະເກີດຂຶ້ນຕໍ່ໄປແມ່ນຫຍັງ?

**ນີ້ແມ່ນສິ່ງທີ່ທ່ານຈຳເປັນຕ້ອງເຮັດ:**

ຮຽກເອົາເງິນຊ່ວຍເຫຼືອທຸກໆອາທິດທີ່ທ່ານຫວ່າງງານ. ອາທິດເລີ່ມຕົ້ນໃນວັນອາທິດ ແລະ ສິ້ນສຸດໃນວັນເສົາ. ອາທິດທຳອິດທີ່ທ່ານຍື່ນເອີ້ນວ່າ "ອາທິດລໍຖ້າ". ທ່ານຈະບໍ່ໄດ້ຮັບເງິນຊ່ວຍເຫຼືອສຳລັບອາທິດນີ້ ແຕ່ທ່ານຕ້ອງຮຽກຮ້ອງເອົາມັນເພື່ອໃຫ້ໄດ້ຮັບການຈ່າຍເງິນໃນອະນາຄົດ. ການຍື່ນຄຳຮຽກຮ້ອງລິເລີ່ມອັນດຽວບໍ່ກຳນົດໃຫ້ເງິນອາທິດລໍຖ້າ. ອາທິດລໍຖ້າຕ້ອງຖືກຮຽກເອົາຄືກັບອາທິດອື່ນໃດໜຶ່ງ.

ທ່ານສາມາດເຮັດການຮຽກຮ້ອງເອົາເງິນປະຈຳອາທິດຂອງທ່ານໄດ້ທາງອອນລາຍໂດຍໄປທີ່ລະບົບການຮຽກຮ້ອງເອົາທາງອອນລາຍຂອງພວກເຮົາ. ມັນເປັນວິທີໄວທີ່ສຸດທີ່ຈະຍື່ນ. ລະບົບສາມາດຮັບຫຼາຍພັງຊັນການຮຽກຮ້ອງ ແລະ ຄຳຖາມກ່ຽວກັບການຮຽກຮ້ອງຂອງທ່ານ. ນອກນັ້ນທ່ານຍັງສາມາດຮຽກຮ້ອງເອົາໂດຍທາງໂທລະສັບໄດ້. ປື້ມຄູ່ມືຜູ້ຮຽກຮ້ອງຈະອະທິບາຍວິທີຮຽກຮ້ອງນີ້.

ທ່ານຈຳເປັນຕ້ອງໄດ້ລົງທະບຽນຢູ່ໃນ iMatchSkills ແລະ ໃຫ້ມີການທົບທວນລາຍບຸກຄົນກັບພະນັກງານສູນແຫຼ່ງວຽກເຮັດ (WorkSource Center). iMatchSkills ແມ່ນເຄື່ອງມືຂອງພະແນກການຈ້າງງານທີ່ເຊື່ອມຕໍ່ທ່ານກັບນາຍຈ້າງທີ່ຈ້າງເຮັດວຽກ. ທ່ານຈະໄດ້ຮັບໜັງສືໃນສອງສາມວັນບອກທ່ານກ່ຽວກັບວິທີລົງທະບຽນ ແລະ ເຮັດການທົບທວນຂອງທ່ານໃຫ້ສຳເລັດ. ການບໍ່ລົງທະບຽນ ແລະ ເຮັດການທົບທວນບຸກຄົນໃຫ້ສຳເລັດຈະສົ່ງຜົນໃຫ້ມີການປະຕິເສດເງິນຊ່ວຍເຫຼືອ.

**ນີ້ແມ່ນສິ່ງທີ່ພວກເຮົາກຳລັງຈະເຮັດ:**

ພະນັກງານຮັບຜິດຊອບການຮຽກຮ້ອງຂອງພວກເຮົາຈະທົບທວນເບິ່ງຂໍ້ມູນທີ່ທ່ານສົ່ງມາກ່ອນເຮັດການກຳນົດການຮຽກຮ້ອງຫວ່າງງານຂອງທ່ານ. ຂະບວນການນີ້ອາດຈະໃຊ້ເວລາສອງສາມວັນ. ພວກເຮົາຈະຕິດຕໍ່ທ່ານ ຖ້າພວກເຮົາຕ້ອງການຂໍ້ມູນເພີ່ມເຕີມ.

ພວກເຮົາຈະສົ່ງຄຳຢັ້ງຢືນທີ່ຊີ້ບອກຈຳນວນເງິນຊ່ວຍເຫຼືອປະຈຳອາທິດຂອງທ່ານໃຫ້ທາງໄປສະນີ. ມັນຈະມີລາຍການຄ່າແຮງງານທີ່ນຳໃຊ້ເພື່ອກຳນົດເງິນຊ່ວຍເຫຼືອຂອງທ່ານ. ພວກເຮົາຈະຂໍເອົາຄ່າແຮງງານຢູ່ນອກລັດ ແລະ ໜ່ວຍງານລັດຖະບານກາງທີ່ທ່ານອາດຈະມີ. ພວກເຮົາຈະເພີ່ມພວກມັນໃສ່ຄຳຮຽກຮ້ອງຂອງທ່ານ ເມື່ອໜ່ວຍງານຂອງພວກເຮົາໄດ້ຮັບ.

ການຈ່າຍເງິນຊ່ວຍເຫຼືອເທື່ອທຳອິດແມ່ນຈະຈ່າຍເປັນເຊັກໃຫ້, ການຈ່າຍເງິນເທື່ອຕໍ່ໆມາຈະອອກໃຫ້ໂດຍທາງອີເລັກໂທຣນິກໂດຍບັດ ReliaCard VISA ຫຼື ການຝາກເຂົ້າບັນຊີໂດຍກົງ. ລາຍລະອຽດເພີ່ມເຕີມກ່ຽວກັບການຈ່າຍເງິນຈະມີໃຫ້ຫຼັງຈາກການຮຽກຮ້ອງຂອງທ່ານຖືກດຳເນີນການ.

State of Oregon
Employment
Department

**ຕ້ອງການຊ່ວຍເຫຼືອບໍ່?**
ກົມຈັດງານແຫ່ງລັດອໍຣິກອນ (OED) ຄືໜ່ວຍງານໃຫ້ໂອກາດຢ່າງເທົ່າທຽມກັນ. OED ຈັດໃຫ້ມີການຊ່ວຍເຫຼືອທີ່ບໍ່ເສຍຄ່າ ເພື່ອວ່າທ່ານຈະສາມາດໃຊ້ບໍລິການຂອງພວກເຮົາ. ບາງຕົວຢ່າງແມ່ນລ່າມແປພາສາມື ແລະ ພາສາເວົ້າ, ເນື້ອຫາລາຍລັກອັກສອນເປັນພາສາອື່ນໆ, ແບບພິມໃຫຍ່, ສຽງ ແລະ ຮູບແບບອື່ນໆ. ເພື່ອຮັບການຊ່ວຍເຫຼືອ, ກະລຸນາເຂົ້າເບິ່ງ unemployment.oregon.gov ແລະ ຄລິກໃສ່ ຕິດຕໍ່ພວກເຮົາ ຫຼື ໂທຫາພວກເຮົາທີ່ໝາຍເລກ 877-345-3484. ຜູ້ໃຊ້ TTY ໂທ 711.

| ລາຍເຊັນ: | ວັນທີ: |
|---|---|

**ກະລຸນາສົ່ງໃບຄຳຮ້ອງຂອງທ່ານທີ່ປະກອບຄົບຖ້ວນແລ້ວໂດຍ:**

**ທາງໄປສະນີ:** Oregon Employment Department | 875 Union St. NE | Room 201 | Salem, Oregon 97311

**ແຟັກ:** (503) 947-1668

U.S. Bank ReliaCard® ການເປີດເຜີຍຂໍ້ມູນກ່ອນຊື້
ຊື່ໂຄງການ: Oregon Unemployment Insurance

ການບໍລິການອາດຈະມີໃຫ້ເປັນພາສາອັງກິດເທົ່ານັ້ນ.

ທ່ານມີທາງເລືອກກ່ຽວກັບວິທີການຮັບການຊໍາລະເງິນຂອງທ່ານ,
ເຊິ່ງລວມທັງການຝາກເຂົ້າບັນຊີທະນາຄານຂອງທ່ານໂດຍກົງ ຫຼື ເຂົ້າບັດຕື່ມເງິນລ່ວງໜ້ານີ້.
ຖາມຕົວແທນຂອງທ່ານ ສໍາລັບທາງເລືອກຕ່າງໆທີ່ມີໃຫ້ ແລະ ເລືອກທາງເລືອກຂອງທ່ານ.

| ຄ່າທໍານຽມລາຍເດືອນ | ຕໍ່ການຊື້ໜຶ່ງຄັ້ງ | ການຖອນເງິນຈາກຕູ້ ATM | ການຕື່ມເງິນສົດຄືນໃໝ່ |
|---|---|---|---|
| **$0** | **$0** | **$0** ໃນເຄືອຂ່າຍ<br>**$2.00*** ນອກເຄືອຂ່າຍ | **ບໍ່ນໍາໃຊ້** |

| | |
|---|---|
| ການຂໍກວດຍອດເງິນທີ່ຍັງເຫຼືອຜ່ານຕູ້ ATM (ໃນເຄືອຂ່າຍ ຫຼື ນອກເຄືອຂ່າຍ) | $0 |
| ການບໍລິການລູກຄ້າ (ແບບອັດຕະໂນມັດ ຫຼື ແບບມີພະນັກງານປະຈໍາ) | $0 ຕໍ່ການໂທຄັ້ງໜຶ່ງ |
| ການບໍ່ມີການເຄື່ອນໄຫວ (ຫຼັງຈາກ 365 ວັນທີ່ບໍ່ມີການເຮັດທຸລະກໍາ) | $2.00 ຕໍ່ເດືອນ |

**ພວກເຮົາເກັບຄ່າທໍານຽມອື່ນໆອີກ 3 ປະເພດ.** ໜຶ່ງໃນນັ້ນໄດ້ແກ່:

| | |
|---|---|
| ການປ່ຽນບັດໃໝ່ (ການຈັດສົ່ງແບບມາດຕະຖານ ຫຼື ແບບດ່ວນ) | $0 ຫຼື $15.00 |

* ຄ່າທໍານຽມນີ້ອາດຈະຕໍ່າກວ່ານີ້ ໂດຍຂຶ້ນຢູ່ກັບວິທີການ ແລະ ສະຖານທີ່ນໍາໃຊ້ບັດນີ້.
ເບິ່ງຕາຕະລາງຄ່າທໍານຽມທີ່ຄັດຕິດມານໍາ ສໍາລັບວິທີການຕ່າງໆໃນການເຂົ້າເບິ່ງເງິນ ແລະ
ຂໍ້ມູນຍອດເງິນຄົງເຫຼືອຂອງທ່ານແບບບໍ່ໄດ້ເສຍຄ່າ.

**ບໍ່ມີຄຸນສົມບັດການເບີກເງິນເກີນບັນຊີ/ເຄຼດິດ.**
ເງິນຂອງທ່ານມີສິດໄດ້ຮັບການປະກັນໄພ FDIC.

ສໍາລັບຂໍ້ມູນທົ່ວໄປກ່ຽວກັບບັນຊີແບບຕື່ມເງິນລ່ວງໜ້າ, ໃຫ້ເຂົ້າໄປທີ່ *cfpb.gov/prepaid* (ເປັນພາສາອັງກິດ).
ຊອກຫາລາຍລະອຽດ ແລະ ເງື່ອນໄຂຕ່າງໆ ສໍາລັບຄ່າທໍານຽມ ແລະ ການບໍລິການທັງໝົດ
ຢູ່ໃນຊຸດເອກະສານມານໍາບັດ ຫຼື ໂທຫາເບີ **1-855-279-1270** ຫຼື ເຂົ້າໄປທີ່ **usbankreliacard.com**
(ເປັນພາສາອັງກິດ).

# U.S. Bank ReliaCard® ຕາຕະລາງຄ່າທຳນຽມ
## ຊື່ໂຄງການ: Oregon Unemployment Insurance

| ຄ່າທຳນຽມທັງໝົດ | ຈຳນວນ | ລາຍລະອຽດ |
|---|---|---|
| **ການຮັບເງິນສົດ** | | |
| ການຖອນເງິນຈາກຕູ້ ATM (ໃນເຄືອຂ່າຍ) | $0 | ນີ້ແມ່ນຄ່າທຳນຽມໃນການຖອນຕໍ່ຄັ້ງຂອງພວກເຮົາ. "ໃນເຄືອຂ່າຍ" ໝາຍເຖິງ ເຄືອຂ່າຍຕູ້ ATM ຂອງທະນາຄານ U.S. Bank ຫຼື MoneyPass®. ທີ່ຕັ້ງຂອງຕູ້ແມ່ນສາມາດຊອກຫາໄດ້ທີ່ _usbank.com/locations_ (ເປັນພາສາອັງກິດ) ຫຼື _moneypass.com/atm-locator.html_ (ເປັນພາສາອັງກິດ). |
| ການຖອນເງິນຈາກຕູ້ ATM (ນອກເຄືອຂ່າຍ) | $2.00 | ນີ້ແມ່ນຄ່າທຳນຽມໃນການຖອນຕໍ່ຄັ້ງຂອງພວກເຮົາ. ຄ່າທຳນຽມນີ້ ແມ່ນໄດ້ຮັບການຍົກເວັ້ນສຳລັບການຖອນເງິນຈາກຕູ້ ATM ໃນ 2 ຄັ້ງທຳອິດຂອງທ່ານຕໍ່ເດືອນ, ເຊິ່ງລວມທັງການຖອນເງິນຈາກຕູ້ ATM (ນອກເຄືອຂ່າຍ) ແລະ ການຖອນເງິນຈາກຕູ້ ATM ສາກົນອີກດ້ວຍ. "ນອກເຄືອຂ່າຍ" ໝາຍເຖິງບັນດາຕູ້ ATM ທັງໝົດທີ່ຢູ່ນອກເຄືອຂ່າຍຕູ້ ATM ຂອງທະນາຄານ U.S. Bank ຫຼື MoneyPass. ນອກຈາກນັ້ນ, ທ່ານອາດຈະຖືກຮຽກເກັບຄ່າທຳນຽມຈາກຜູ້ໃຫ້ບໍລິການຕູ້ ATM ເຖິງແມ່ນວ່າການເຮັດທຸລະກຳຂອງທ່ານບໍ່ສຳເລັດກໍຕາມ. |
| ການຖອນເງິນສົດນຳພະນັກງານບໍລິການລູກຄ້າ | $0 | ນີ້ແມ່ນຄ່າທຳນຽມຂອງພວກເຮົາ ໃນເວລາທີ່ທ່ານຖອນເງິນສົດອອກຈາກບັດຂອງທ່ານນຳພະນັກງານບໍລິການລູກຄ້າ ຢູ່ທະນາຄານ ຫຼື ສະຫະພັນເຄດິດທີ່ຍອມຮັບບັດ Visa®. |
| **ຂໍ້ມູນ** | | |
| ການຂໍກວດຍອດເງິນທີ່ຍັງເຫຼືອຜ່ານຕູ້ ATM (ໃນເຄືອຂ່າຍ) | $0 | ນີ້ແມ່ນຄ່າທຳນຽມໃນການຂໍກວດຕໍ່ຄັ້ງຂອງພວກເຮົາ. "ໃນເຄືອຂ່າຍ" ໝາຍເຖິງ ເຄືອຂ່າຍຕູ້ ATM ຂອງທະນາຄານ U.S. Bank ຫຼື MoneyPass. ທີ່ຕັ້ງຂອງຕູ້ແມ່ນສາມາດຊອກຫາໄດ້ທີ່ _usbank.com/locations_ (ເປັນພາສາອັງກິດ) ຫຼື _moneypass.com/atm-locator.html_ (ເປັນພາສາອັງກິດ). |
| ການຂໍກວດຍອດເງິນທີ່ຍັງເຫຼືອຜ່ານຕູ້ ATM (ນອກເຄືອຂ່າຍ) | $0 | ນີ້ແມ່ນຄ່າທຳນຽມໃນການຂໍກວດຕໍ່ຄັ້ງຂອງພວກເຮົາ. "ນອກເຄືອຂ່າຍ" ໝາຍເຖິງບັນດາຕູ້ ATM ທັງໝົດທີ່ຢູ່ນອກເຄືອຂ່າຍຕູ້ ATM ຂອງທະນາຄານ U.S. Bank ຫຼື MoneyPass. ນອກຈາກນັ້ນ, ທ່ານອາດຈະຖືກຮຽກເກັບຄ່າທຳນຽມຈາກຜູ້ໃຫ້ບໍລິການຕູ້ ATM ອີກດ້ວຍ. |
| **ການນຳໃຊ້ບັດຂອງທ່ານຢູ່ນອກສະຫະລັດ.** | | |
| ການເຮັດທຸລະກຳລະຫວ່າງປະເທດ | 3% | ນີ້ແມ່ນຄ່າທຳນຽມຂອງພວກເຮົາ ທີ່ນຳໃຊ້ໃນເວລາທີ່ທ່ານນຳໃຊ້ບັດຂອງທ່ານສຳລັບການຊື້ເຄື່ອງຢູ່ຮ້ານຄ້າຕ່າງປະເທດ ແລະ ສຳລັບການຖອນເງິນສົດຈາກ ATM ໃນຕ່າງປະເທດ ແລະ ຄິດໄລ່ເປັນເປີເຊັນຈາກຈຳນວນເງິນທີ່ເຮັດທຸລະກຳ, ຫຼັງຈາກມີການແລກປ່ຽນເປັນສະກຸນເງິນໃດໜຶ່ງແລ້ວ. ການເຮັດທຸລະກຳບາງລາຍການ, ເຖິງແມ່ນວ່າທ່ານ ແລະ/ຫຼື ພໍ່ຄ້າ ຫຼື ຕູ້ ATM ຈະຢູ່ໃນສະຫະລັດກໍຕາມ, ຈະຖືວ່າເປັນການເຮັດທຸລະກຳໃນຕ່າງປະເທດພາຍໃຕ້ກົດລະບຽບກ່ຽວກັບເຄືອຂ່າຍທີ່ກ່ຽວຂ້ອງ ແລະ ພວກເຮົາບໍ່ໄດ້ຄວບຄຸມວິທີການຈັດປະເພດພໍ່ຄ້າ, ຕູ້ ATM ແລະ ການເຮັດທຸລະກຳເຫຼົ່ານີ້ ເພື່ອຈຸດປະສົງນີ້. |
| ການຖອນເງິນສົດຈາກຕູ້ ATM ສາກົນ | $2.00 | ນີ້ແມ່ນຄ່າທຳນຽມໃນການຖອນຕໍ່ຄັ້ງຂອງພວກເຮົາ. ຄ່າທຳນຽມນີ້ ແມ່ນໄດ້ຮັບການຍົກເວັ້ນສຳລັບການຖອນເງິນຈາກຕູ້ ATM ໃນ 2 ຄັ້ງທຳອິດຂອງທ່ານຕໍ່ເດືອນ, ເຊິ່ງລວມທັງການຖອນເງິນຈາກຕູ້ ATM (ນອກເຄືອຂ່າຍ) ແລະ ການຖອນເງິນຈາກຕູ້ ATM ສາກົນອີກດ້ວຍ. ນອກຈາກນັ້ນ, ທ່ານອາດຈະຖືກຮຽກເກັບຄ່າທຳນຽມຈາກຜູ້ໃຫ້ບໍລິການຕູ້ ATM ເຖິງແມ່ນວ່າການເຮັດທຸລະກຳຂອງທ່ານບໍ່ສຳເລັດກໍຕາມ. |
| **ອື່ນໆ** | | |
| ການປ່ຽນບັດໃໝ່ | $0 | ນີ້ແມ່ນຄ່າທຳນຽມຂອງພວກເຮົາຕໍ່ການປ່ຽນບັດໃໝ່ທີ່ສົ່ງໄປໃຫ້ທ່ານດ້ວຍການຈັດສົ່ງແບບມາດຕະຖານ (ບໍ່ເກີນ 10 ວັນລັດຖະການ). |
| ການຈັດສົ່ງການປ່ຽນບັດໃໝ່ແບບດ່ວນ | $15.00 | ນີ້ແມ່ນຄ່າທຳນຽມຂອງພວກເຮົາ ສຳລັບການຈັດສົ່ງແບບດ່ວນ (ບໍ່ເກີນ 3 ວັນລັດຖະການ) ທີ່ຮຽກເກັບນອກເໜືອຈາກຄ່າທຳນຽມໃນການປ່ຽນບັດໃໝ່ໃດໜຶ່ງ. |
| ການບໍ່ມີການເຄື່ອນໄຫວ | $2.00 | ນີ້ແມ່ນຄ່າທຳນຽມຂອງພວກເຮົາທີ່ຮຽກເກັບໃນແຕ່ລະເດືອນ ຫຼັງຈາກທີ່ທ່ານບໍ່ໄດ້ເຮັດທຸລະກຳໂດຍໃຊ້ບັດຂອງທ່ານເປັນເວລາ 365 ມື້ຕິດຕໍ່ກັນ. |

ເຖິງແມ່ນວ່າການຕິດຕໍ່ສື່ສານນີ້ ແມ່ນມີໃຫ້ເປັນ ພາສາລາວ ກໍຕາມ, ການຕິດຕໍ່ສື່ສານພາຍຫຼັງຂອງທະນາຄານ U.S. Bank ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງກັບຂໍ້ຕົກລົງຕາມສັນຍາ, ການເປີດເຜີຍຂໍ້ມູນ, ແຈ້ງການ ແລະ ໃບແຈ້ງຍອດທະນາຄານຂອງທ່ານ, ການບໍລິການທະນາຄານໃນອິນເຕີເນັດ ແລະ ໃນໂທລະສັບມືຖື ແມ່ນອາດຈະມີໃຫ້ເປັນພາສາອັງກິດເທົ່ານັ້ນ. ທ່ານຕ້ອງສາມາດອ່ານ ແລະ ເຂົ້າໃຈເອກະສານເຫຼົ່ານີ້ ຫຼື ໄດ້ຮັບການຊ່ວຍເຫຼືອໃນການແປເອກະສານເຫຼົ່ານີ້ ເພື່ອໃຫ້ເຂົ້າໃຈ ແລະ ນຳໃຊ້ຜະລິດຕະພັນ ຫຼື ການບໍລິການນີ້. ຈະມີເອກະສານສະບັບພາສາອັງກິດໃຫ້ຕາມການຮ້ອງຂໍ.

ເງິນຂອງທ່ານມີສິດໄດ້ຮັບການປະກັນໄພ FDIC. ເງິນຂອງທ່ານຈະຖືກເກັບໄວ້ທີ່ U.S. Bank National Association, ເຊິ່ງເປັນສະຖາບັນທີ່ມີການປະກັນໄພ FDIC ແລະ ໄດ້ຮັບການປະກັນໄພສູງເຖິງ $250,000 ຈາກ FDIC ໃນກໍລະນີທີ່ທະນາຄານ U.S. Bank ລົ້ມລະລາຍ. ເຂົ້າເບິ່ງ _fdic.gov/deposit/deposits/prepaid.html_ (ເປັນພາສາອັງກິດ) ສຳລັບລາຍລະອຽດຕ່າງໆ.

ບໍ່ມີຄຸນສົມບັດການເບີກເງິນເກີນບັນຊີ/ເຄດິດ.
ຕິດຕໍ່ Cardholder Services (ຝ່າຍບໍລິການຜູ້ຖືບັດ) ໂດຍການໂທຫາເບີ **1-855-279-1270**, ຜ່ານທາງໄປສະນີທີ່ P.O. Box 551617, Jacksonville, FL 32255 ຫຼື ເຂົ້າໄປທີ່ **_usbankreliacard.com_** (ເປັນພາສາອັງກິດ).

ສຳລັບຂໍ້ມູນທົ່ວໄປກ່ຽວກັບບັນຊີແບບຕື່ມເງິນລ່ວງໜ້າ, ໃຫ້ເຂົ້າໄປທີ່ _cfpb.gov/prepaid_ (ເປັນພາສາອັງກິດ). ຖ້າທ່ານມີຄຳຮ້ອງທຸກ ກ່ຽວກັບບັນຊີແບບຕື່ມເງິນລ່ວງໜ້າ, ໃຫ້ໂທຫາ Consumer Financial Protection Bureau (ສຳນັກງານປົກປ້ອງທາງດ້ານການເງິນຜູ້ບໍລິໂພກ) ທີ່ເບີ 1-855-411-2372 ຫຼື ເຂົ້າໄປທີ່ _cfpb.gov/complaint_ (ເປັນພາສາອັງກິດ).

CR-26908157

ບ ັດ ReliaCard ແມ ່ນອອກໃຫ ້ໂດຍ U.S. Bank National Association ອ ີງຕາມໃບອະນ ຸຍາດຈາກ Visa U.S.A. Inc. © 2023 U.S. Bank. Member FDIC.